ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໗໕/ປພຖຊ/໐໗໔໗໐໙**

# ບົດຄວາມ

## ມອບສິດນຳໃຊ້ທີ່ດິນ ໃຫ້ຄົນລາວຕ່າງສັນຊາດ

ນະໂຍບາຍນຳໃຊ້ທີ່ດິນ ໃຫ້ຄົນລາວຕ່າງສັນຊາດ ແມ່ນເຄື່ອງມືໂຄສະນາຊວນເຊື່ອ ໃຫ້ຄົນລາວຢູ່ນອກປະເທດ ຫັນໜ້າເຂົ້າມາຢູ່ກ້ອງອຳນາດຜະເດັດການພັກດຽວອີກຄັ້ງໃໝ່, ດ້ວຍການນຳໃຊ້ເງິນຂອງຕົນເອງ ທີ່ທຳງານຢູ່ໃນຕ່າງປະເທດນັ້ນ ມາຄ້ຳປະກັນຕົວເອງ ໃຫ້ໄດ້ກັບມາຢູ່ກ້ອງອຳນາດຜະເດັດການວຽງຈັນ.

ນະໂຍບາຍຂອງພັກຣັດໄດ້ຣະບຸໄວ້ວ່າ "**ຄົນລາວຕ່າງສັນຊາດ ທີ່ຢາກກັບຄືນມາຢູ່ ສປປລາວ. ຢ່າງຖາວອນ, ຍາວນານ, ສາມາດຊື້ສິດນຳໃຊ້ທີ່ດິນໄດ້, ຕ້ອງມີເງິນຝາກທະນາຄານ ຕ່ຳສຸດ...**$50,000 **ດອນລາສະຫະຣັດ ຫລື ມີລາຍຮັບ ຕ່ຳສຸດ...**$500 ດອນລາຕໍ່ເດືອນ ຝາກທະນາຄານກັບຣັດ"; ສາມາດຊື້ທີ່ດິນປູກຕົ້ນໄມ້., ບໍ່ໃຫ້ເກີນ **800** ຕາແມັດ ຕໍ່ຄົນ. **-ສຳລັບຜູ້ມາລົງທຶນ, ຕ້ອງມີເງິນຝາກທະນາຄານ ຕ່ຳສຸດ $100.000 ດອນລາ, ຫລືມີລາຍຮັບ $1,200 ດອນລາຕໍ່ເດືອນ ຝາກນຳທະນາຄານຣັດ, ກໍສາມາດຊື້ດິນປູກຕົ້ນໄມ້ ບໍ່ໃຫ້ເກີນ 800 ຕາແມັດ ຕໍ່ຄົນ. ດິນທີ່ຊື້ນັ້ນ, ແມ່ນຢູ່ໃນຮູບການໃຫ້ເຊົ່າ ຫລືສຳປະທານທີ່ດິນ.**

ອັນນີ້, ກໍໝາຍຄວາມວ່າ "ຜູ້ເຖົ້າໄປບຳນານ ກັບຄືນປະເທດ, ມີລາຍຮັບ 500ດອນລາແຕ່ລະເດືອນຕ້ອງເອົາໄປມອບໃຫ້ພັກຣັດໝົດ!. ເມື່ອບໍ່ມີຄວາມຍຸຕິທັມເກີດຂຶ້ນ, ດ້ວຍການກັ່ນແກ້ງນາໆປະການ, ພັກຣັດ ກໍຈະຍຶດເອົາເງິນນັ້ນໄປໝົດ! ແລະປັບໃໝລົງໂທດ, ໂດຍອ້າງວ່າ "ຜິດຕໍ່ກົດໝາຍ

ສປປລາວ" ຄືດັ່ງນັກລົງທຶນຫລາຍຄົນ ທີ່ໄດ້ມາທຳທຸຣະກິດແລ້ວ, ເອົາຕົວເກືອບບໍ່ລອດ...ຫລຸບທັງທຶນ ຫລຸບທັງກຳໄຣ.

ພວກເຮົາເຫັນວ່າ, ນະໂຍບາຍມອບສິດນຳໃຊ້ທີ່ດິນ ບໍ່ຖືກຕ້ອງ! ເປັນນະໂຍບາຍເຫັນແກ່ຕົວ! ຂາດຄວາມຍຸຕິທັມ, ບໍ່ມີຄວາມຈິງໃຈຕໍ່ຄົນລາວຕ່າງສັນຊາດ. ມັນເປັນພຽງເຫຍື່ອລໍ້ ໃຫ້ເຂົ້າມາຕິກຖືກບ້ວງ ແຮ້ວ ຕາມແຜນນະໂຍບາຍກວາດຕ້ອນ ແລະດັບສູນ ຂອງພັກຣັດເທົ່ານັ້ນເອງ; ເພາະການໃຫ້ເອົາເງິນ $50,000 ຫລື $100,000 ດອນລາ ເຂົ້າມາຝາກໄວ້ທະນາຄານກັບຣັດ, ຊຶ່ງໃນຕົວແລ້ວ, ມັນກໍບໍ່ແຕກ ຕ່າງຫຍັງ ກັບ"**ເອົາເຊືອກສົ້ນນຶ່ງ ມັດຄໍຕົນເອງ ແລະອີກສົ້ນນຶ່ງ ກໍປ່ອຍໃສ່ມື ຂອງອຳນາດຜະເດັດການ, ສຸດແລ້ວແຕ່ເຂົາ ຈະແກ່ລາກໄປທາງໃດ ກໍໄດ້ຕາມໃຈ, ທັງໆທີ່ຕົນ ໄດ້ພົບກັບດິນແດນແຫ່ງ ອິສຣະພາບມາແລ້ວ, ກໍບໍ່ໜ້າຈະກັບໄປ**".

**ເມື່ອກັບຄືນ ສປປລາວ.ແລ້ວ, ບັນຫາຕ່າງໆ ກໍຈະຕິດຕາມມາ, ເປັນຕົ້ນ ມີການນາບຂູ່, ຈອບອອຍ ຊຸກຍູ້ ໃຫ້ຖືສັນຊາດລາວ ແຕ່ຢ່າງດຽວ, ໂດຍອ້າງວ່າ "ເພື່ອສດວກໃນການທຳທຸຣະກິດ ແລະຈະໄດ້ທວງຫາວເອົາ ໄຮ່ນາຕາກ້າ, ຮົ້ວສວນ ຫລືບ້ານເຮືອນຂອງຕົນ ທີ່ໄດ້ປະຖິ້ມ, ໂຕນໜີໄປ ຢູ່ຕ່າງປະເທດນັ້ນຄືນມາ.** -ຖ້າຫລົງກິນລວງ ຫລື ຕັ້ງໃຈ ເຮັດໃຫ້ຖືກໃຈເຈົ້ານາຍເພິ່ນ, ຍອມປະຖິ້ມ ສັນຊາດອື່ນໆ ເວລານັ້ນ, ປະເທດທີ່ຕົນໄດ້ຮັບສັນຊາດໃໝ່ ກໍບໍ່ສາມາດເຂົ້າມາຫຍຸ້ງກ່ຽວຊ່ວຍເຫລືອ ໃຫ້ຄວາມເປັນທັມແກ່ຕົນໄດ້. ອັນນີ້, ຄືບັ້ນອາວະສານ ຂອງຄົນລາວຕ່າງສັນຊາດ ທີ່ຢາກກັບຄືນປະເທດ ຢູ່ພາຍໃຕ້ອຳນາດຜະເດັດການພັກດຽວ.

ພວກເຮົາ ຮຽກຮ້ອງມາຍັງຄົນລາວນອກປະເທດ, ຢ່າໄດ້ຫລົງເຊື່ອໃນນະໂຍບາຍມອບສິດນຳໃຊ້ທີ່ດິນ ຂອງພັກຣັດ, ເພາະມັນບໍ່ໄດ້ຕອບສນອງ ກັບຄວາມຮຽກຮ້ອງຕ້ອງການຂອງທ່ານ ທີ່ຢາກເມືອຢູ່ບ້ານເກີດ ເມືອງນອນຂອງຕົນ ຢ່າງມີອິສຣະເສຣີ ຄືກັນກັບທີ່ຕົນ ໄດ້ໃຊ້ຊີວິດຢູ່ຕ່າງປະເທດ ທີ່ມີອິສຣະພາບມາແລ້ວ. **ມີແຕ່ສາມະຄີກັນ ເປັນນໍ້າໜຶ່ງໃຈດຽວ ຕໍ່ສູ້ເອົາສິດທິເສຣີພາບ ຂອງພວກເຮົາ ທີ່ພັກຣັດ ປຸ້ນຈີ້ເອົາໄປນັ້ນ ກັບຄືນມາ ໃຫ້ປະຊາຊົນລາວທັງຊາດເທົ່ານັ້ນເອງ... ຊີວິດການເປັນຢູ່ ຂອງທ່ານ ໃນບັ້ນປາຍ ຈຶ່ງຈະໄດ້ພົບ ກັບຄວາມມີສັນຕິສຸຂ ອັນແທ້ຈິງ.**

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໒໗ ສິງຫາ ໒໐໐໙.**